ສຳນັກງານ ຄຄຊ
ຂາເຂົ້າ | ເລກທີ 0233
ວັນທີ 28 FEB 2018
ໂທລະສັບ 021 217770

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ເລກທີ 040 /ຫກ
ນະຄອນຫຼວງວຽງຈັນ, ວັນທີ 26 ກຸມພາ 2018

# ແຈ້ງການ

**ເຖິງ:** - ບັນດາກົມ ແລະ ທຽບເທົ່າກົມພາຍໃນ ທະນາຄານແຫ່ງ ສປປ ລາວ;
- ທະນາຄານແຫ່ງ ສປປ ລາວ ສາຂາ ພາກເໜືອ, ພາກກາງ ແລະ ພາກໃຕ້;
- ບັນດາທະນາຄານທຸລະກິດລັດ, ທະນາຄານເອກະຊົນ, ທະນາຄານຕ່າງປະເທດ ແລະ ສາຂາ ທະນາຄານຕ່າງປະເທດ.

**ເລື່ອງ:** ການເສຍຄ່າທຳນຽມທາງ (ໃບຄ່າທາງ) ປະຈຳປີ 2018

- ອີງຕາມແຈ້ງການຂອງ ກະຊວງການເງິນ ສະບັບເລກທີ 0333/ກງ, ລົງວັນທີ 01 ກຸມພາ 2018.

ຫ້ອງການທະນາຄານແຫ່ງ ສປປ ລາວ ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານ ຊ່ວຍຊຸກຍູ້ພະນັກງານ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ ທີ່ນຳໃຊ້ພະຫະນະຂອງລັດ (ປ້າຍຟ້າ), ພາຫະນະຂອງບໍລິສັດ ແລະ ພາຫະນະຂອງເອກະຊົນ ໃຫ້ເສຍຄ່າທຳນຽມທາງຕາມອັດຕາທີ່ໄດ້ກຳນົດໄວ້ໃນ ລັດຖະບັນຍັດວ່າດ້ວຍຄ່າທຳນຽມທາງ ເພື່ອເປັນການປະກອບສ່ວນພັນທະຕໍ່ງົບປະມານແຫ່ງລັດຢ່າງຕັ້ງໜ້າ ແລະ ທັນຕາມກຳນົດເວລາ ຊຶ່ງໃນນັ້ນ, ການເສຍຄ່າທາງ ປະຈຳປີ 2017 ແມ່ນສາມາດຊຳລະ ຮອດວັນທີ 31 ມີນາ 2018 ແລະ ສຳລັບ ປະຈຳປີ 2018 ແມ່ນສາມາດຊຳລະ ຮອດວັນທີ 30 ມິຖຸນາ 2018. ຖ້າກາຍກຳນົດເວລາດັ່ງກ່າວ ຄື ນັບແຕ່ວັນທີ 01 ກໍລະກົດ 2018 ເປັນຕົ້ນໄປ ຈະຖືກປັບໃໝຕາມລະບຽບທີ່ໄດ້ກຳນົດໄວ້.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຕາມແຈ້ງການນີ້ດ້ວຍ.

ຫົວໜ້າຫ້ອງການ

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ພົດສະຖາພອນ ແກ້ວວົງວິຈິດ